# ບົດຂ່າວ

**ຄົນທີ່ມີຄວາມພິການໄດ້ຮ່ວມນຳສະເຫນີຜົນໄດ້ຮັບຫຼັກຕໍ່ຄູ່ຮ່ວມງານລະດັບຊາດໃນເວທີແລກປ່ຽນ**

ໃນວັນທີ 10 ທັນວາ 2021, ທີ່ນະຄອນຫຼວງວຽງຈັນ. ອົງການຈັດຕັ້ງຂອງຄົນພິການ (OPDs) ໄດ້ນຳສະເໜີຜົນໄດ້ຮັບຫຼັກຈາກບົດລາຍງານຮ່ວມເພື່ອສົ່ງໃຫ້ຄະນະກຳມະການຂອງອົງການສະຫະປະຊາຊາດ ວ່າດ້ວຍສິດທິຂອງຄົນພິການ (CRPD) ສະບັບຮັບຮອງແລ້ວຕໍ່ລັດຖະບານ, ອົງການຈັດຕັ້ງສາກົນ (INGO), ອົງການສະຫະປະຊາຊາດ ແລະ ຄູ່ຮ່ວມພັດທະນາຕ່າງໆໃນເວທີແລກປ່ຽນ.

ສປປ ລາວ ແມ່ນໜຶ່ງໃນ 184 ລັດພາຄີຂອງສົນທິສັນຍາ ສປຊ ວ່າດ້ວຍສິດທິຂອງຄົນພິການ (ສົນທິສັນຍາ ວ່າດ້ວຍສິດທິຂອງຄົນພິການ), ເຊິ່ງໃຫ້ຄຳໝັ້ນສັນຍາໃຫ້ລັດຖະບານປົກປ້ອງສິດທິມະນຸດຂອງຄົນພິການ ແລະ ດຳເນີນການກວດກາເປັນປົກກະຕິໂດຍຄະນະກຳມະການ (CRPD) ກ່ຽວກັບຄວາມຄືບໜ້າຂອງເຂົາເຈົ້ານັບແຕ່ໄດ້ຮັບການໃຫ້ສັດຕະຍາບັນໃນປີ 2009, ລັດຖະບານ ສປປ ລາວ ໄດ້ບັນລຸຜົນສຳເລັດໃນການປະຕິບັດສົນທິສັນຍາ ວ່າດ້ວຍ ສິດທິຂອງຄົນພິການ (CRPD), ລວມມີການປັບປຸງລັດຖະທຳມະນູນປີ 2015, ກົດໝາຍ ວ່າດ້ວຍຄົນພິການ ແລະ ບັນດາກົດໝາຍ, ນະໂຍບາຍອື່ນໆອີກຫຼາຍສະບັບກ່ຽວກັບການສຶກສາ, ສາທາລະນະສຸກ, ການຊ່ວຍເຫຼືອດ້ານກົດໝາຍ ແລະ ການຈ້າງງານ.

ໃນເດືອນສິງຫາ 2022, ຄະນະກຳມະການສົນທິສັນຍາ ວ່າດ້ວຍສິດທິຂອງຄົນພິການ (CRPD) ຈະທົບທວນຄືນການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍສິດທິຂອງຄົນພິການ (CPRD) ຂອງ ສປປ ລາວ ເຊິ່ງເປັນຄັ້ງທຳອິດທີ່ຈະຮ່ວມກັບ ສປ ຈີນ, ຍີ່ປຸ່ນ, ບັງກະລາເທດ, ອິນໂດເນເຊຍ ແລະ ສ.ເກົາຫຼີ.

ອົງການຈັດຕັ້ງຂອງຄົນພິການແມ່ນມີບົດບາດສຳຄັນໃນການທົບທວນ ສົນທິສັນຍາ ວ່າດ້ວຍສິດທິຂອງຄົນພິການ (CRPD), ໂດຍການຍື່ນບົດລາຍງານຄູ່ຂະໜານຕໍ່ຄະນະກຳມະການຂອງສົນທິສັນຍາ ວ່າດ້ວຍສິດທິຂອງຄົນພິການ (CRPD), ການນຳໃຊ້ຂໍ້ມູນທີ່ເກັບກຳໂດຍຄົນພິການ ແລະ ປະຕິບັດຕາມຄຳຂວັນທີ່ເປັນສູນກາງຂອງສົນທິສັນຍາ ວ່າດ້ວຍສິດທິຂອງຄົນພິການ (CRPD) ສຳລັບ ອົງການຈັດຕັ້ງຂອງຄົນພິການ (OPDs): "ບໍ່ມີຫຍັງກ່ຽວກັບພວກເຮົາໂດຍປາສະຈາກພວກເຮົາ."

ອົງການຈັດຕັ້ງຂອງຄົນພິການ 11 ອົງກອນ (OPDs) ໃນທົ່ວ 11 ແຂວງ ໄດ້ປະກອບສ່ວນເຂົ້າໃນການຍື່ນສະເໜີຮ່ວມກັນ, ເຊິ່ງເປັນການຕາງໜ້າໃຫ້ຄົນພິການທຸກໆຄົນ ລວມທັງຄົນທີ່ມີຄວາມບົກຜ່ອງທາງປະສາດສຳພັດ, ຄົນທີ່ມີຄວາມຫຍຸ້ງຍາກທາງຮ່າງກາຍ ແລະ ຄົນທີ່ມີຄວາມພິການທາງສະຕິປັນຍາ ແລະ ໂອທິສຕິກ ແລະ ຜູ້ເບິ່ງແຍງຂອງເຂົາເຈົ້າ ໂດຍການສະໜັບສະໜູນຈາກ ອົງການ ສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ ເຂົາເຈົ້າໄດ້ເຂົ້າຮ່ວມກອງປະຊຸມເພື່ອທົບທວນ ກົດໝາຍແຫ່ງຊາດ, ວິເຄາະຂໍ້ມູນຄວາມພິການ ແລະ ແລກປ່ຽນປະສົບການຕົວຈິງຂອງຄົນພິການນັບພັນຄົນກ່ຽວກັບອຸປະສັກທີ່ສືບຕໍ່ກີດຂວາງເຂົາເຈົ້າຈາກສັງຄົມ.

ທ່ານ ຊອນ ໂອຄອນແນວ, ຫົວໜ້າໜ່ວຍງານ ການປົກຄອງ, ອົງການ ສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ ໃຫ້ຄຳເຫັນວ່າ, *"ການສົ່ງບົດລາຍງານຮ່ວມຂອງ OPDs ໃຫ້ຄະນະກຳມະການ CRPD ສະແດງເຖິງບົດບາດທີ່ສຳຄັນຂອງ OPDs ໃນການຮັບປະກັນວ່າປະສົບການຕ່າງໆຂອງຄົນທີ່ມີຄວາມພິການແມ່ນຖືກລວມເຂົ້າໃນການສ້າງສາ ສປປ ລາວ ໃຫ້ມີ*

*ສ່ວນຮ່ວມ ແລະ ມີຄວາມຍືນຍົງ. ມື້ນີ້ຖືວ່າເປັນໂອກາດທີ່ດີທີ່ພວກເຮົາທຸກຄົນໄດ້ຮັບຟັງຄົນທີ່ມີຄວາມພິການ ແລະ ສ້າງຄວາມເຂົ້າໃຈໃນສິ່ງທີ່ພວກເຮົາຈັດຕັ້ງປະຕິບັດໄດ້ດີ ແລະ ໃນຈຸດໃດທີ່ພວກເຮົາສາມາດຮ່ວມມືກັນໃນຕໍ່ໜ້າເພື່ອປັບປຸງຊີວິດການເປັນຢູ່ຂອງຄົນທີ່ມີຄວາມພິການ.''*

ໃນເວທີແລກປ່ຽນນີ້ອົງການຈັດຕັ້ງຂອງຄົນພິການ (OPDs) ໄດ້ນໍາສະເໜີຜົນໄດ້ຮັບ ຂອງພວກເຂົາ ເຊິ່ງໄດ້ມາຈາກສ່ວນບຸກຄົນເພື່ອຮ່າງ 78 ຂໍ້ສະເໜີແນະໃຫ້ແກ່ລັດຖະບານໃນທຸກ 6 ຫົວຂໍ້ ລວມທັງກົດຫມາຍ, ຄວາມຍຸຕິທໍາ, ການມີສ່ວນຮ່ວມ, ສາທາລະນະສຸກ, ການສຶກສາ, ການຈ້າງງານ ແລະ ການປົກປ້ອງທາງສັງຄົມ, ສິດທິຂອງແມ່ຍິງ ແລະ ເດັກນ້ອຍພິການ ແລະ ການເຂົ້າເຖິງຂໍ້ມູນຂ່າວສານທາງສາທາລະນະ ແລະ ພື້ນຖານໂຄງລ່າງ.

ປະທານສະມາຄົມຄົນຫູໜວກ, ທ່ານ ນາງ ພານິຕາ ໄມພອນ, ໄດ້ໃຫ້ຄໍາເຫັນວ່າ, *''ປະສົບການໃນການຮ່າງບົດລາຍງານໄດ້ສ້າງໂອກາດທີ່ດີໃນການຮຽນຮູ້ສໍາລັບພວກເຮົາທຸກຄົນຜູ້ທີ່ໄດ້ມີສ່ວນຮ່ວມ. ບໍ່ພຽງແຕ່ລະສະມາຄົມພວກເຮົາໄດ້ຮັບຄວາມເຂົ້າໃຈຢ່າງເລິກເຊິ່ງຂຶ້ນກ່ຽວກັບສົນທິສັນຍາເທົ່ານັ້ນ, ແຕ່ຍັງເຂົ້າໃຈຫຼາຍຂຶ້ນກ່ຽວກັບສິ່ງທ້າທາຍຕ່າງໆທີ່ຫຼາກຫຼາຍທີ່ຄົນພິການໄດ້ພົບພໍ້ຢູ່ໃນ ສປປ ລາວ. ຂະບວນການຕ່າງໆໄດ້ພັດທະນາທັກສະຂອງພວກເຮົາທາງດ້ານການຄົ້ນຄ້ວາ, ການເຮັດວຽກເປັນທີມ, ການສະໜັບສະໜູນ, ແລະ ພວກເຮົາຫວັງຢ່າງຍິ່ງວ່າຈະໄດ້ສືບຕໍ່ເຮັດວຽກຮ່ວມກັນໃນຂະບວນການຂອງ CRPD.''*

ຜູ້ເຂົ້າຮ່ວມຈາກສາກົນໄດ້ຊົມເຊີຍລັດຖະບານ ແລະ ອົງການຈັດຕັ້ງຂອງຄົນພິການ (OPDs) ສໍາລັບການມີສ່ວນຮ່ວມໃນທາງບວກຕໍ່ການທົບທວນສົນທິສັນຍາ ວ່າດ້ວຍສິດທິຂອງຄົນພິການ (CRPD) ເຊິ່ງເປັນຄັ້ງທໍາອິດຂອງພວກເຂົາ. ລັດຖະບານ, ອົງການຈັດຕັ້ງຂອງຄົນພິການ (OPDs) ແລະ ຄູ່ຮ່ວມພັດທະນາ ໄດ້ຕົກລົງທີ່ຈະເຮັດວຽກຮ່ວມກັນຢ່າງໃກ້ຊິດ ເພື່ອຈັດຕັ້ງປະຕິບັດຂໍ້ສະເໜີແນະຕ່າງໆຂອງ ສປປ ລາວ ພາຍໃຕ້ ສົນທິສັນຍາ ວ່າດ້ວຍສິດທິຂອງຄົນພິການ (CRPD) ໃນຊຸມປີຕໍ່ໜ້າ.